**ໂຮງຮຽນວັນອາທິດ**

**ວັນອາທິດ ທີ 24 ເດືອນກໍຣະດາ 2022 (07-24-2022 )**

**ເພື່ອນບ້ານຂອງທ່ານແມ່ນໃຜ?**

*ຕອນໃຫຍ່ຂຶ້ນ, ວຽກທີ່ໜ້າເບື່ອຫຼືການບ້ານຂອງໂຮງຮຽນປະເພດໃດທີ່ທ່ານຈະເຮັດ "ພໍແຕ່" ທີ່ຈະຜ່ານໄດ້?*

**ຈຸດສຳຄັນໃນບົດຮຽນ:** ຄວາມຮັກກະຕຸ້ນຄວາມສົນໃຈເຮົາໃຫ້ເປັນເພື່ອນບ້ານທີ່ຄົນອື່ນຕ້ອງການ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ການເຕີບໂຕຂຶ້ນໃນຄອບຄົວ ແມັກຄອຍ (McCoy), ຂ້າພະເຈົ້າເປັນຜູ້ທີ່ຮູ້ຈັກວ່າເປັນສິ່ງທີ່ຂ້າພະເຈົ້າມັກເອີ້ນວ່າ "ການທ້າທາຍຢູ່ພາຍໃນບ້ານ" ມີເວລາທີ່ຂ້າພະເຈົ້າພັບແລະເອົາເຄື່ອງທີ່ເປື້ອນໄປເກັບໄວ້...ເວລາທີ່ຂ້າພະເຈົ້າເອົາຖ້ວຍເປື້ອນທີ່ຄິດວ່າມັນສະອາດ (ຂ້າພະເຈົ້າຕຳນິຈັກລ້າງຖ້ວຍ-ຂັ້ນຕອນຂອງການລ້າງລ່ວງໜ້າກ່ອນໄລ)...ແລະເວລາທີ່ຂ້າພະເຈົ້າໃສ່ຈານເຂົ້າໄປໃນເຄື່ອງລ້າງຈານດ້ວຍນ້ຳສະບູລ້າງຈານ ແລະແລ້ວທ່ານສາມາດເດົາໄດ້ບໍ່ວ່າມີຫຍັງເກີດຂຶ້ນໃນຂັ້ນຕໍ່ໄປ. ຂ້າພະເຈົ້າມີຊື່ສຽງທີ່ບໍ່ດີໃນການທຳຄວາມສະອາດອີງຕາມສິ່ງທີ່ພໍ່ແມ່ຂອງຂ້າພະເຈົ້າຮັບຮູ້, ພຽງແຕ່ບໍ່ໄດ້ເບິ່ງໃກ້. ຫຼືຈັບເບິ່ງ. ສິ່ງທີ່ເບິ່ງຄືວ່າສະອາດນັ້ນເປັນພຽງແຕ່ຜິວເຜີນ.

ພຣະເຢຊູໄດ້ຕອບຄຳຖາມແບບນີ້ເລື້ອຍໆເມື່ອພຣະອົງໄດ້ບອກຄົນນຶ່ງວ່າໃຫ້ຮັກເພື່ອນບ້ານເໝືອນຮັກຕົນເອງ. ເມື່ອຊາຍຄົນນັ້ນໄດ້ຍິນ, ການຕອບໂຕ້ທຳອິດຂອງລາວແມ່ນຖາມພຣະເຢຊູກ່ຽວກັບການກະທຳທີ່ພຣະເຈົ້າຮັບຮູ້, ແທນທີ່ຈະເປັນຈິດໃຈທີ່ພຣະເຈົ້າຄາດຫັວງ. ທ່ານແລະຂ້າພະເຈົ້າສາມາດຕົກຢູ່ໃນແນວຄວາມຄິດອັນດຽວກັນນີ້, ແລະຖ້າພວກເຮົາເປັນ, ພວກເຮົາບໍ່ພຽງແຕ່ຜິດພາດຕໍ່ຄຳສັ່ງສອນທີ່ສຳຄັນຂອງພຣະຜູ້ເປັນເຈົ້າເທົ່ານັ້ນ, ແຕ່ພວກເຮົາຈະພາດຕໍ່ການຕື່ມເຕັມເປົ້າໝາຍຂອງພວກເຮົາດ້ວຍ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

**1. ລູກາ 10:25-28.**

*25. ແລະເບິ່ງແມ! ມີທັມບັນດິດຄົນນຶ່ງຢືນຂຶ້ນ ທົດລອງພຣະອົງທູນຖາມວ່າ, "ອາຈານເອີຍ, ຂ້ານ້ອຍຈະຕ້ອງເຮັດແນວໃດຈຶ່ງຈະໄດ້ຊີວິດອັນຕລອດໄປເປັນນິດ?". 26. ພຣະອົງຊົງຕອບວ່າ, "ໃນພຣະບັນຍັດມີຄຳຂຽນໄວ້ວ່າຢ່າງໃດ ທ່ານໄດ້ອ່ານເຂົ້າໃຈຢ່າງໃດ?" 27. ເພິ່ນທູນຕອບວ່າ, "ຈົ່ງຮັກອົງພຣະຜູ້ເປັນເຈົ້າ, ຜູ້ເປັນພຣະເຈົ້າຂອງເຈົ້າ ດ້ວຍສຸດໃຈ, ດ້ວຍສຸດຈິດ, ດ້ວຍສຸດກຳລັງ, ແລະດ້ວຍສຸດຄວາມຄຶດຂອງເຈົ້າ' ແລະ 'ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ'." 28. ພຣະອົງຊົງຕອບເພິ່ນວ່າ, "ທ່ານຕອບຖືກແລ້ວ ຕໍ່ໄປຈົ່ງເຮັດຢ່າງນັ້ນແລ້ວທ່ານຈະໄດ້ຊີວິດ."*

ພວກເຮົາກຳລັງກັບມາສຶກສານຶ່ງໃນເຣື່ອງທີ່ຄຸ້ນເຄີຍຫຼາຍທີ່ສຸດຂອງພຣະເຢຊູ, ຄຳອຸປມາເຣື່ອງຊາວຊາມາເຣັຽຜູ້ໃຈດີ, ແຕ່ຂໍໃຫ້ເຂົ້າໃຈລາຍລະອຽດທີ່ສຳຄັນ: ພຣະເຢຊູໄດ້ໃຫ້ຄຳອຸປມານີ້ເພື່ອຕອບຄຳຖາມທີ່ຊີ້ໃຫ້ເຫັນວ່າ. ຜູ້ທີ່ຖາມພຣະເຢຊູໃນເຣື່ອງນີ້ແມ່ນຟາຣີຊາຍ "ຜູ້ທີ່ຊ່ຽວຊານພຣະບັນຍັດ." ປົກກະຕິແລ້ວພວກເຮົາຄິດວ່າພວກຟາຣີຊາຍແລະຜູ້ນຳທາງສາສນາໃນພຣະກິດຕິຄຸນເປັນ "ຄົນບໍ່ດີ" ໃນພຣະຄັມພີໃໝ່ເພາະວ່າພວກເຂົາເປັນສັດຕູກັບພຣະເຢຊູ, ແຕ່ພວກເຮົາລືມໄປວ່າພວກຟາຣີຊາຍເຫຼົ່ານີ້ຖືກຖືວ່າເປັນພວກຄົນທີ່ດີທີ່ສຸດໃນຊຸມຊົນ. ຊາຍຄົນນີ້ເປັນຄຣູສອນ, ຖືວ່າເປັນຜູ້ຊ່ຽວຊານໃນພຣະຄັມພີ. ລາວຮູ້ທັງໝົດກ່ຽວກັບຂໍ້ບັນຍັດຂອງພຣະເຈົ້າ. ລາວຍັງທ່ອງຈຳມັນໄດ້ທຸກຂໍ້. ນອກຈາກວ່າພວກເຂົາພາດບາງຈຸດ. ພຽງແຕ່ເບິ່ງການຂຶ້ນຕົ້ນຄຳຖາມຂອງລາວ: "ພຣະອາຈານຂ້ານ້ອຍຈະເຮັດແນວໃດ?" ລາວມີຄວາມມຸ້ງຫວັງກັບການກະທຳພາຍນອກ, ແຕ່ຈຸດປະສົງທີ່ແທ້ຈິງຂອງພຣະບັນຍັດແມ່ນເພື່ອສະແດງໃຫ້ພວກເຮົາຮູ້ວ່າພວກເຮົາບໍ່ສາມາດເຮັດສິ່ງໃດທີ່ຈະເປັນຜູ້ຊອບທັມໃນສາຍຕາຂອງພຣະເຈົ້າໄດ້, ຫຼາຍກ່ວາທີ່ພວກເຮົາຈະສາມາດບິນໄປເຖິງດວງຈັນ.

ພຣະບັນຍັດໝາຍເຖິງການຊີ້ບອກພວກເຮົາໄປເຖິງພຣະຜູ້ຊ່ວຍໃຫ້ລອດທີ່ສາມາດຊ່ວຍເຮົາ: ພຣະເຢຊູຄຣິດ. ພຣະບັນຍັດທີ່ຜູ້ນຳທາງສາສນາຄົນນີ້ຮູ້ເບື້ອງໜ້າຫຼືເບື້ອງຫຼັງນັ້ນຄວນເຮັດໃຫ້ລາວຮ້ອງທູນຕໍ່ພຣະເຈົ້າເພື່ອຄວາມເມດຕາ, ໂດຍຮູ້ວ່າລາວບໍ່ສາມາດປະຕິບັດຕາມພຣະບັນຍັດໄດ້ຢ່າງສົມບູນແບບຕາມມາດຕະຖານຂອງພຣະເຈົ້າ. ແຕ່ເມື່ອຜູ້ທີ່ມີຄວາມຮູ້ການປະຕິບັດແຕ່ຍັງຕ້ອງໃຊ້ຄວາມພະຍາຍາມ. ພຣະເຢຊູ, ໃນແບບແຜນເກົ່າໆທີ່ເກີດຂຶ້ນທີ່ສວນເອເດນ (ປະຖົມມະການ 3:8-13), ໄດ້ເລີ້ມຕົ້ນນຳສເນີຄວາມຈິງດ້ວຍຄຳຖາມຂອງພຣະເຈົ້າ. ແລະ, ດ້ວຍເຫດຜົນວ່າເປັນຜູ້ທີ່ຮູ້ແລະເຂົ້າໃຈໃນພຣະບັນຍັດດີ, ທັມບັນດິດຄົນນັ້ນ “ຕອບຢ່າງຖືກຕ້ອງ.” ລາວຮູ້ສິ່ງທີ່ບັນທຶກໄວ້ໃນພຣະບັນຍັດແລະລາວກໍເຂົ້າໃຈໃນຄຳສັ່ງທີ່ພຣະເຢຊູໄດ້ກຳນົດໄວ້ກ່ອນໜ້ານັ້ນວ່າພຣະບັນຍັດສອງຂໍ້ທີ່ຍິ່ງໃຫ່ຍທີ່ສຸດເມື່ອ “ທັມບັນດິດທີ່ຊ່ຽວຊານດ້ານພຣະບັນຍັດໄດ້ຖາມຄຳຖາມນຶ່ງເພື່ອທົດສອບພຣະອົງວ່າ:... *ຈົ່ງຮັກອົງພຣະຜູ້ເປັນເຈົ້າ, ຜູ້ເປັນພຣະເຈົ້າຂອງເຈົ້າ ດ້ວຍສຸດໃຈ, ດ້ວຍສຸດຈິດ, ດ້ວຍສຸດກຳລັງ, ແລະດ້ວຍສຸດຄວາມຄຶດຂອງເຈົ້າ’* ອັນທີສອງກໍຄື:ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ.” (ມັດທາຍ 22:35-39) ບັດນີ້ການທ້າທາຍເກີດຂຶ້ນ: ພຣະເຢຊູບອກລາວໃຫ້ເຊື່ອຟັງພຣະບັນຍັດ “ຈົ່ງເຮັດຢ່າງນີ້ແລ້ວເຈົ້າຈະໄດ້ຊີວິດ.” ການທີ່ຮູ້ວ່າພຣະຄຳຂອງພຣະເຈົ້າບອກໃຫ້ຮູ້ວ່າຄວາມສຳຄັນຫຼາຍປານໃດ. ຖ້າພວກເຮົາເລືອກທີ່ຈະບໍ່ປະຕິບັດຕາມ, ຄວາມຈິງ, ຖ້າພວກເຮົາຮູ້ຫຼາຍ, ພວກເຮົາກໍມີຄວາມຮັບຜິດຊອບຫຼາຍສຳລັບການເຊື່ອຟັງສິ່ງທີ່ພວກເຮົາຮູ້ຈັກ, ຜູ້ນຳສາສນານີ້ຮູ້ດີວ່າຄຳສັ່ງຂອງພຣະເຈົ້າຕ້ອງການຫັຽງ, ແລະລາວຕ້ອງມີຄວາມຮັບຜິດຊອບຕໍ່ການເຊື່ອຟັງ-ຫຼືບໍ່.

## **2. ລູກາ 10:29-32**

*29. ແຕ່ຜູ້ນັ້ນປາຖນາຈະສະແດງວ່າຕົວເປັນຄົນສົມທັມ ຈິ່ງທູນພຣະເຢຊູວ່າ, “ແມ່ນໃຜເປັນເພື່ອນບ້ານຂອງຂ້ານ້ອຍ?” 30. ພຣະເຢ*
*ຊູຊົງຕອບວ່າ, “ມີຊາຍຄົນນຶ່ງລົງຈາກກຸງເຢຣູຊາເລັມຈະໄປເມືອງເຢຣິໂກ ແລະຕົກໃນມືພວກປຸ້ນ ພວກປຸ້ນນັ້ນໄດ້ແກ້ເອົາເຄື່ອງນຸ່ງຜູ້*
*ນັ້ນໄປ ທັງທຸບຕີແລ້ວປະຖິ້ມໄວ້ເກືອບຕາຍ. 31. ບັງເອີນມີປະໂລຫິດຕົນນຶ່ງໄດ້ລົງໄປທາງນັ້ນ ເມື່ອເຫັນຄົນນັ້ນກໍເວັ້ນໄປຟາກອື່ນ*
*ເສັຽ. 32. ມີຄົນນຶ່ງໃນພວກເລວີກໍເຮັດເໝືອນກັນ ເມື່ອມາເຖິງບ່ອນນັ້ນແລະເຫັນແລ້ວ ກໍເວັ້ນກາຍໄປຟາກອື່ນເສັຽ.*

ຜູ້ນຳສາສນາຄົນນີ້ຢາກ “ສະແດງຕົວເອງ” ແລະເປັນຄົນຊອບທັມດ້ວຍຕົວເອງ. ແຜນການຂອງລາວແມ່ນເພື່ອປະຕິບັດຕາມພຣະບັນຍັດຢ່າງລະມັດລະວັງ (ຊຶ່ງເປັນໄປບໍ່ໄດ້) ດັ່ງນັ້ນ, ລາວບໍ່ໄດ້ຊອກຫາຂໍ້ມູນເມື່ອລາວຖາມວ່າ, "ແລະແມ່ນໃຜເປັນເພື່ອນບ້ານຂອງຂ້ານ້ອຍ?” ລາວກຳລັງຊອກຫາການເຮັດໃຫ້ພົ້ນຈາກຄວາມຜິດ-ການອ້າງຕົວວ່າບໍ່ມີຄວາມຜິດແລະຂໍ້ແກ້ຕົວສຳລັບພຶດຕິກຳຂອງລາວ. ຄວາມຈິງແມ່ນ, ເພື່ອນບ້ານຂອງລາວ-ແລະເພື່ອນບ້ານຂອງພວກເຮົາ-ບໍ່ໄດ້ຈຳກັດຄວາມພຽງແຕ່ຜູ້ທີ່ໃກ້ຄຽງເທົ່ານັ້ນ, ເພື່ອນບ້ານຂອງພວກເຮົາແມ່ນມະນຸດຄົນອື່ນໆ. ແຕ່ນັກທັມບັນດິດຜູ້ນີ້ຢາກຊອກຫາທາງອອກຈາກການເຊື່ອຟັງຢ່າງເຕັມສ່ວນ. ລາວຢາກຮູ້ວ່າພຣະເຢຊູຈະກວດສອບສິ່ງໃດເພື່ອໃຫ້ແນ່ໃຈວ່າລາວເຊື່ອຟັງ “ຢ່າງຖືກຕ້ອງ” ບໍ່ແມ່ນສິ່ງທີ່ພຣະເຢຊູຄາດຫວັງຈາກຜູ້ຕິດຕາມ. ແນ່ນອນວ່າລາວຮູ້ຂອບເຂດຂອງຄຳສັ່ງ. ເປັນຫັຽງລາວຈຶ່ງພະຍາຍາມຊອກຫາຊ່ອງຫ່ວາງເພື່ອບໍ່ໃຫ້ຕິດຕາມມັນ? ນັກທັມຜູ້ຊ່ຽວຊານໃນເຣື່ອງພຣະບັນຍັດຕ້ອງການຫຼຸດຜ່ອນຕໍ່ຄຳສັ່ງຂອງພຣະເຈົ້າໃນບາງສິ່ງບາງຢ່າງທີ່ລາວສາມາດເຮັດດ້ວຍສິດທິອຳນາດຂອງຕົວເອງ. ນັ້ນອາດຈະເປັນຍ້ອນລາວຮູ້ວ່າການຮັກເພື່ອນບ້ານຄືກັບຮັກຕົວເອງນັ້ນເປັນໄປບໍ່ໄດ້. ມີແຕ່ພຣະເຈົ້າເທົ່ານັ້ນທີ່ດີພໍທີ່ຈະຮັກທຸກຄົນ, ແລະພຽງແຕ່ມີຄວາມຮັກຂອງພຣະເຈົ້າເທົ່ານັ້ນເຂົ້າສູ່ຈິດໃຈຂອງພວກເຮົາ, ພວກເຮົາສາມາດສ້າງຄວາມຮັກນັ້ນໃຫ້ເກີດຂຶ້ນພາຍໃນຕົວເຮົາ. ຄຳຕອບຂອງພຣະເຢຊູຕໍ່ຄຳຖາມຂອງນັກທັມບັນດິດນັ້ນໄດ້ມຸ້ງປະເດັນເຂົ້າໄປໃນຈຸດໃຈກາງຂອງພຣະບັນຍັດຂອງພຣະເຈົ້າແລະສະແດງໃຫ້ເຫັນເຖິງການເຊື່ອມຕໍ່ທີ່ບໍ່ແຕກແຍກລະຫ່ວາງຕົວຕົນທາງຝ່າຍວິນຍານທີ່ແທ້ຈິງຂອງຄົນໃດຄົນນຶ່ງແລະວິທີເຂົາປະຕິບັດຕໍ່ຄົນອື່ນໆ. ເຣື່ອງນີ້ໄດ້ບົ່ງບອກສະຖານທີ່ຄຸ້ນເຄີຍກັບພຣະເຢຊູ: ເສັ້ນທາງຈາກເມືອງເຢຣູຊາເລັມໄປເຖິງເມືອງເຢຣິໂກ. ຄົນທີ່ເດີນທາງໄປມາໃນທີ່ນີ້ມີຄວາມສ່ຽງທີ່ຈະຖືກປຸ້ນແລະຖືກໂຈມຕີ. ຜູ້ທີ່ເດີນທາງໃນຄຳອຸປມາຂອງພຣະເຢຊູຖືກປຸ້ນແລະຖືກທຸບຕີຢ່າງໂຫດຮ້າຍແລະປ່ອຍໃຫ້ຕາຍຢູ່ຂ້າງທາງ. ຄວາມຫວັງອັນນຶ່ງຂອງລາວແມ່ນຕ້ອງການໃຫ້ຜູ້ໃດຜູ້ນຶ່ງພົບເຫັນທັນເວລາເພື່ອຊ່ວຍຊີວິດຂອງຕົນ. ການເຂົ້າໃນເປືອກນອກຂອງ “ຄວາມຊອບທັມ.” ທັງປະໂລຫິດແລະຄົນເລວີເປັນ “ຜູ້ປະກອບອາຊີບທາງສາສນາ”; ປະໂລຫິດໄດ້ຖວາຍເຄື່ອງບູຊາໃນພຣະວິຫານແລະຊາວເລວີໄດ້ຊ່ວຍພວກປະໂລຫິດແລະມີໜ້າທີ່ຕ່າງໆໃນພຣະວິຫານ. ແຕ່ສຳລັບບຸກຄົນທັງສອງພວກນີ້ເປັນຄົນທີ່

ເຄັ່ງຄັດທາງສາສນາ, ໜ້າທີ່ທາງສາສນາ, ແລະມີຄວາມຮູ້ກ່ຽວກັບພຣະບັນຍັດ, ແຕ່ເຂົາຂາດຄວາມເມດຕາ, ຂາດມະນຸສທັມ, ແລະຂາດຄວາມຮັກ.

ຜູ້ນຳເຫຼົ່ານີ້ຮູ້ຈັກພຣະເຈົ້າ. ຜູ້ທີ່ຮູ້ຈັກພຣະເຈົ້າແລະຮັກພຣະອົງກໍ່ຍັງຈະຮູ້ຈັກຮັກເພື່ອນບ້ານຂອງຕົນ. ແລະຜູ້ທີ່ຮັກເພື່ອນບ້ານຂອງຕົນກໍຈະປະຕິເສດທີ່ຈະບໍ່ສົນໃຈຄວາມຕ້ອງການຂອງເພື່ອນບ້ານ. ປະໂລຫິດແລະຊາວເລວີໃນຄຳອຸປມາຂອງພຣະເຢຊູໄດ້ເຕືອນພວກເຮົາວ່າພວກເຮົາສາມາດກາຍເປັນເໝືອນພວກປະໂລຫິດແລະຄົນເລວີ, ແຕ່ຍັງເດີນຢູ່ໃນເສັ້ນທາງຂອງພຣະອົງ. ເມື່ອພວກເຮົາເຮັດແບບນັ້ນ, ກໍພິສູດວ່າພວກເຮົາບໍ່ເຄີຍຮູ້ຈັກຂ້າງໃນຈິດໃຈຂອງພວກເຮົາວ່າພຣະຜູ້ເປັນເຈົ້າທີ່ພວກເຮົາປະກາດດ້ວຍປາກຂອງພວກເຮົາ.

*ເປັນດ້ວຍເຫດໃດທີ່ພວກເຮົາມັກເບິ່ງຂ້າມບັນຫາຂອງຄົນອື່ນໆ ແທນທີ່ຈະຊ່ວຍພວກເຂົາ?*

## 3 ລູກາ 10:33-37

*33. ແຕ່ໄທຊາມາເຣັຽຄົນນຶ່ງໄດ້ເດີນທາງມາເຖິງຄົນນັ້ນ ຄັນເຫັນແລ້ວກໍມີໃຈເມດຕາ. 34. ແລ້ວເຂົ້າໄປເອົາຜ້າພັນບາດໃຫ້ແລະເອົານ້ຳມັນກັບເຫຼົ້າແວງຖອກໃສ່ບາດນັ້ນ ຈຶ່ງໂຈມຂຶ້ນຂີ່ສັດຂອງຕົນພາໄປເຖິງໂຮງແຮມບ່ອນນຶ່ງ ແລ້ວເອົາໃຈໃສ່ບົວລະບັດລາວ. 35. ເຖິງວັນໜ້າມາທ່ານໄດ້ອອກເງິນສອງເດນາຣິອົນໃຫ້ເຈົ້າຂອງໂຮງແຮມ ບອກວ່າ, 'ຈົ່ງເອົາໃຈໃສ່ບົວລະບັດຄົນນີ້ເນີ! ຖ້າທ່ານຈ່າຍເກີນນີ້ໄປເທົ່າໃດ ເມື່ອເຮົາກັບມາກໍຈະໃຊ້ໃຫ້'. 36. ໃນສາມຄົນນີ້ ທ່ານເຫັນວ່າຄົນໃດເປັນເພື່ອນບ້ານຂອງຄົນທີ່ຕົກໃນມືພວກປຸ້ນນັ້ນ." 37. ທັມບັນດິດຜູ້ນັ້ນທູນຕອບວ່າ, "ຄືຄົນທີ່ໄດ້ສະແດງຄວາມເມດຕາຕໍ່ຜູ້ນັ້ນແຫລະ" ແລ້ວພຣະເຢຊູຊົງຕອບວ່າ, "ທ່ານຈົ່ງໄປເຮັດຢ່າງນັ້ນເໝືອນກັນ.*

ຄຳອຸປມາຂອງພຣະເຢຊູສະແດງເຖິງວິລະຊົນຄົນນຶ່ງທີ່ບໍ່ໜ້າຈະເປັນໄປໄດ້ໃນວັດທະນະທັມຂອງຊາວຢິວ: "ຊາວຊາມາເຣັຽ." ໃນທຸກວິທີທາງ, ຊາວຢິວເຊື່ອວ່າພວກເຂົາດີກ່ວາຊາວຊາມາເຣັຽ. ຄົນຢິວທີ່ດີຈະບໍ່ກ່ຽວຂ້ອງກັບຊາວຊາມາເຣັຽ. ດັ່ງນັ້ນ, ລອງນຶກພາບເຖິງການຕອບໂຕ້ຂອງຜູ້ນຳສາສນາຢິວເມື່ອພຣະເຢຊູໃຊ້ຄົນຊາມາເຣັຽທີ່ຖືກກຽດຊັງໃຫ້ເປັນວິລະຊົນໃນເຣື່ອງຄຳອຸປມາຂອງພຣະອົງ. ພຣະເຢຊູໄດ້ພະຍາຍາມກະຕຸ້ນຄວາມຮູ້ອັນຕື້ນໆຂອງຊາຍຄົນນີ້ບໍ່? ບໍ່ແມ່ນ, ພຣະເຢຊູໄດ້ໃຫ້ຄວາມຊັດເຈນກັບຊາຍຄົນນັ້ນທີ່ຖາມຄຳຖາມວ່າ "ໃຜເປັນເພື່ອນບ້ານຂອງຂ້ານ້ອຍ?" (ລູກາ 1:29). ແຕ່ພຣະເຢຊູໄດ້ໃຫ້ຄຳຕອບກັບຄົນນັ້ນດ້ວຍຄຳຖາມ "ໃນສາມຄົນນີ້ຜູ້ໃດເປັນເພື່ອນບ້ານຂອງຄົນທີ່ຕົກຢູ່ໃນມືຂອງພວກໂຈນ" ຄຳຖາມທີ່ແທ້ຈິງບໍ່ແມ່ນໃຜເປັນເພື່ອນບ້ານຂອງຂ້ອຍ ແຕ່ຂ້ອຍເປັນເພື່ອນບ້ານປະເພດໃດ?

ແນ່ນອນ, ເພື່ອນບ້ານທີ່ແທ້ຈິງແມ່ນຜູ້ທີ່ມີຄວາມເມດຕາສົງສານ. ຄວາມເມດຕາສົງສານຂອງຊາວຊາມາເຣັຽໄດ້ສະແດງອອກມາຈາກຄ່າໃຊ້ຈ່າຍຊັບສິ່ງຂອງສ່ວນຕົວ. ທຸກສິ່ງທຸກຢ່າງທີ່ຄົນຊາມາເຣັຽທຸ້ມເທໃຫ້ກັບຊາຍທີ່ຕົກຢູ່ໃນມືຂອງໂຈນຄົນນີ້. ເພື່ອນບ້ານທີ່ແທ້ຈິງໃນຄຳອຸປມາຂອງພຣະເຢຊູແມ່ນຜູ້ຊາຍທີ່ເຮັດສຳເລັດໃນຂໍ້ຕົ້ນຂອງຂໍ້ຄຳສັ່ງຂອງພຣະເຈົ້າແລະສະແດງຄວາມເມດຕາ.

*ແມ່ນຫຍັງຄືຄວາມສ່ຽງທີ່ພວກເຮົາມີໃນການຮັກຄົນອື່ນໃຫ້ດີ?*

ພຣະເຢຊູບໍ່ໄດ້ມີຄວາມປະທັບໃຈກັບຄວາມຮູ້ຂອງຊາຍຄົນນີ້. ແທນທີ່ຈະເປັນຢ່າງນັ້ນ, ພຣະອົງໄດ້ເປັນຫ່ວງກ່ຽວກັບສະພາບທາງຈິດຂອງຊາຍຄົນນັ້ນ. ຫຼັງຈາກທີ່ຜູ້ນຳທາງສາສນາຄົນນັ້ນໄດ້ຮັບຮູ້ວ່າ "ຜູ້ທີ່ສະແດງຄວາມເມດຕາ" ເປັນເພື່ອນບ້ານແທ້ ພຣະເຢຊູໄດ້ບອກກັບລາວວ່າ, ຈົ່ງໄປເຮັດແບບນັ້ນເໝືອນກັນ.

ໜ້າເສົ້າໃຈ, ສະມາຊິກຄຣິສຕະຈັກຫຼາຍຄົນທີ່ໄດ້ຮັບການຝຶກຝົນຢ່າງດີໃນພຣະຄຳຂອງພຣະເຈົ້າ, ແຕ່ພວກເຂົາບໍ່ໄດ້ປະຕິບັດຕາມທາງຂອງພຣະອົງ. ພວກເຂົາຍຶດໝັ້ນກ່ອນຢູ່ກັບການເຮັດໃນສິ່ງທີ່ພຣະເຈົ້າຮັບຮູ້, ແຕ່ພວກເຂົາບໍ່ມີຫົວໃຈທີ່ພຣະອົງຄາດຫັວງ. ແຕ່ຜູ້ທີ່ເກີດມາຈາກພຣະເຈົ້າແທ້ໆ ກໍຢູ່ໃນຄວາມຮັກຂອງພຣະເຈົ້າແລະຮູ້ຈັກຮັກຄົນອື່ນໆ.

*ແມ່ນຫຍັງຄືຄວາມສຳພັນລະຫວ່າງຄວາມຮັກຂອງພວກເຮົາຕໍ່ພຣະເຈົ້າແລະຄວາມຮັກຂອງເຮົາຕໍ່ຄົນອື່ນໆ?*

## ການນຳໃຊ້ໃນຊີວິດ

ຄວາມຮັກກະຕຸ້ນຄວາມສົນໃຈຂອງພວກເຮົາໃຫ້ເປັນເພື່ອນບ້ານທີ່ຄົນອື່ນໆຕ້ອງການ. ຈົ່ງເລືອກເອົານຶ່ງຂໍ້ຂອງການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ອະທິຖານ.** ຊຳລະທຳຄວາມສະອາດສິ່ງທີ່ຊຸກຊ່ອນໄວ້ໃນຂ້າງໃນຂອງຈິດໃຈຫຼືຄວາມຄິດ, ແລະໃນຂນະທີ່ທ່ານກຳລັງເຮັດຢູ່ນັ້ນ, ຂໍພຣະເຈົ້າໃຫ້ອຳນາດທ່ານບໍ່ໃຫ້ຈັ້ງຢູ່ກັບສິ່ງທີ່ພຣະອົງຮັບຮູ້, ແຕ່ຂໍໃຫ້ປ່ຽນແປງຈິດໃຈໃໝ່ໃຫ້ຕິດຕາມໃນສິ່ງທີ່ພຣະອົງຄາດຫັວງ.

- **ສຸມໃຈໃສ່.** ກຳນົດດ້ວຍການຊ່ວຍເຫຼືອຂອງພຣະເຈົ້າບໍ່ໃຫ້ຖືເບົາຕໍ່ຄົນອື່ນທີ່ຜ່ານເຂົ້າມາ, ແຕ່ໃຫ້ໃຊ້ເວລາ, ສັງເກດເບິ່ງດ້ວຍຕາ, ແລະສ້າງຄວາມສົນໃຈໃຫ້ກັບເຂົາ, ໃຫ້ຄວາມເມດຕາ, ແລະພຣະຄຸນທີ່ເຂົາຕ້ອງການ. ຫາເວລາທີ່ຈະຢູ່ກັບຄົນເຫຼົ່ານັ້ນ.

- **ຊ່ວຍເຫຼືອ.** ຫໍ່ເອົາເຂົ້າໜົມຫຼືອາຫານແຫ້ງ, ກວດນ້ຳ, ຖົງຕີນ, ແລະພຣະຄັມພີແລະຂຽນຂໍ້ພຣະຄຳບາງປໂຍກໃສ່ຖົງເກັບໄວ້ໃນຣົດຂອງທ່ານ, ເພື່ອມອບໃຫ້ກັບຄົນທີ່ຢືນຢູ່ຕາມແຈຖນົນທີ່ຖືປ້າຍຂໍຄວາມຊ່ວຍເຫຼືອ.

ພວກເຮົາທຸກຄົນອາດຈະບໍ່ສາມາດທຳຄວາມສະອາດໄດ້ດີ, ແຕ່ແນ່ນອນວ່າພວກເຮົາສາມາດຮັກໄດ້ດີ. ການຮຽນຮູ້ທີ່ຈະຮັກຄົນອື່ນດ້ວຍໃຈທີ່ພຣະເຈົ້າຄາດຫັວງ, ແທນທີ່ຈະເປັນພຽງແຕ່ການປະຕິບັດທີ່ເຮົາຄິດວ່າພຣະເຈົ້າຮັບຮູ້, ມັນແມ່ນຂັ້ນຕອນຂອງການເຕີບໃຫ່ຍ. ໂດຍໄດ້ຮັບອຳນາດຈາກພຣະວິນຍານ, ພວກເຮົາສາມາດດຳເນີນບາດກ້າວເພື່ອຈະເຣີນເຕີບໂຕໃນພຣະຄຸນຂອງການຮັກຄົນອື່ນໆ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR.**